ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 0003 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 08 ມັງກອນ 2018

# ແຈ້ງການ

ຮຽນ: ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ມວນຊົນ.

ເລື່ອງ: ແຈ້ງການກ່ຽວກັບການຮັບຮອງບໍລິສັດປະເມີນມູນຄ່າຊັບສິນໃນວຽກງານຫຼັກຊັບ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມ ລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ສະບັບເລກທີ 003/ຄຄຊ, ລົງວັນທີ 08 ທັນວາ 2015.

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບວ່າ ໃນປະຈຸບັນ ສຄຄຊ ໄດ້ຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ຈຳນວນສາມບໍລິສັດ ເພື່ອໃຫ້ສາມາດເຄື່ອນໄຫວວຽກງານປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ ດັ່ງມີລາຍຊື່ລຸ່ມນີ້:

1. ບໍລິສັດ ຊິມ ພອບເພີຕີ້ ຄອນເຊົ້າເທັ້ນ ຈຳກັດ (Sims Property Consultants Co.,Ltd);
2. ບໍລິສັດ ລາວປະເມີນຊັບສິນ ຈຳກັດ (Lao Assets Appraisal Co.,Ltd);
3. ບໍລິສັດ ປະເມີນມູນຄ່າຊັບສິນ ແກຣນທ໌ ເຊີແມນ (ລາວ) ຈຳກັດ (Grant Sherman Appraisal (Lao) Co.,Ltd).

ຖ້າພົບເຫັນການເຄື່ອນໄຫວຂອງບໍລິສັດອື່ນ ທີ່ເຄື່ອນໄຫວປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ ນອກຈາກສາມບໍລິສັດຂ້າງເທິງ ກະລຸນາແຈ້ງໃຫ້ ສຄຄຊ ຮັບຊາບ ຕາມໝາຍເລກສາຍດ່ວນ 1602 ດ້ວຍ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ.

ຫົວໜ້າສຳນັກງານ

ຄະນະກຳມະການຄຸ້ມຄອງຫຼັກຊັບ ສຳນັກງານ ຄຄຊ

ສາຍສະໝອນ ຈັນທະຈັກ